วินัยพระสงฆ์...ชาวโยมควรรู้

โดย: อาจารย์ไพบูรย์ วินทวงส์

ເພື່ອພວກເຮົາຈະໄດ້ຊ່ວຍກັນຮັກສາພຣະພຸທທະສາສນາໄວ້ໃຫ້ ລູກຫລານຂອງພວກເຮົາ!

ພຸທທະບໍຣິສັທຄວຣພາກັນສຶກສາຮ່ຳຮຽນພຣະທັມມ໌-ພຣະວິນັຍໃຫ້ ວິພັສນາຄວຣຈຶ່ງພາກັນເຮັດບຸນຍ໌ໄດ້ຢ່າງຖືກຕ້ອງຕາມພຣະທັມມ໌ທີ່ພຣະອົງຄ໌ຊົງ ສອນໄວ້ .....ປັດຈຸບັນມີຄົນຈຳນວນຫລາຍພໍປະມານໄດ້ເຂົ້າມາບວຊໃນພຣະ ພຸທທະສາສນາ (ມາບວດໃນວັດ ອາສັຍຜ້າເຫລືອງ) ຫາກິນນຳຊາວບ້ານ (ຊາວພຸທທ໌) ຜລ ເຫັນວ່າຫາກພວກເຮົາບໍ່ເອົາໃຈໃສ່ປ່ອຍປະລະເລີຍ ເອົາ ໄປຕາມເວຣຕາມກັມມ໌ແລ້ວ ພວກມຫາໂຈຣໃນຊຸດຜ້າເຫລືອງກໍ່ຈະແຫ່ງໄດ້ ໃຈທຸ່ງເຫາກິນກັບຊາວບ້ານ ພວກເຮົາຄວຣຮຽນຮູ້ວ່າພຣະແທ້ ຫຼື ພຣະ ປອມ! ..."**ເງິນທອງເປັນຂອງຫາຍາກ**" ເພາະສະນັ້ນແລ້ວພວກເຮົາຄວຣ ເລືອກເຮັດບຸນຍ໌ໃຫ້ເປັນ! ..ຫາກພວກເຮົາໄດ້ເຮັດບຸນຍ໌ກັບພຣະສົງຄ໌ທີ່ແທ້ ແລ້ວຈຶ່ງຈະເປັນບຸນຍ໌-ເປັນກຸສົລທີ່ແທ້ຈິງ ແລະເພື່ອທີ່ຈະໄດ້ອຸທິສໃຫ້ແກ່ ພໍ່-ແມ່, ພີ່ນ້ອງ ຈຶ່ງຈະໄດ້ຮັບບຸນຍ໌-ກຸສົລນັ້ນໂດຍແທ້!

ຜູ້ຂ້າຈຶ່ງໄດ້ຮິບໂຮມເອົາ "**ພຣະວິນັຍ**" ໂດຍຫຍໍ້ພໍເປັນສັງເຂປ ມາໃຫ້ພີ່ນ້ອງຊາວພຸທທ໌ໄດ້ຮຽນຮູ້ ເພື່ອຈັກໄດ້ເຮັດບຸນຍ໌ໃຫ້ຖືກຕ້ອງ ແລະຮັກສາໄວ້ເຊິ່ງພຣະພຸທທະສາສນາໄປໃນໂຕ...ໆ

...ອາຈາຣຍ໌ໄພທູຣຍ໌ ອິນທວົງສ໌

ເພື່ອໃຫ້ຍາຕໂຍມພີ່ນ້ອງເຮົາ ແລະພຣະສົງຄ໌ໄດ້ສຶກສາຮຽນຮູ້ພຣະວິນັຍແບບສັງເຂປນີ້ໃຫ້ງ່າຍຍິ່ງຂຶ້ນ ຊຶ່ງຈຳເປັນສຳຫຼັບຊາວບ້ານຢ່າງພວກເຮົາ ***ຮ່ວມທັງພຣະສົງຄ໌ທີ່ກຳລັງສືບທອດພຣະພຸທທສາສນາ*** ໃຫ້ດຳຣົງຢູ່ກັບສັງຄົມຊາວພຸທທ໌ລາວເຮົາຕໍ່ໄປ ພວກເຮົາໃນຖານະທີ່ເປັນຍາຕໂຍມຄວຣຮູ້ຈັກພຣະວິນັຍຂອງພຣະສົງຄ໌ພໍສົມຄວຣ ເພື່ອທີ່ຈະໄດ້ປຕິບັຕິຕົນໃຫ້ສົມກັບເປັນອຸບາສົກ-ອຸບາສິກາໃນພຣະພຸທທະສາສນາ ເພື່ອຈະຊ່ວຍກັນດຳຣົງໄວ້ຊຶ່ງພຣະສາສນາໃຫ້ແກ່ລູກຫລານຂອງພວກເຮົາສືບໄປຯ

ພວກເຮົາຈະໄດ້ຮູ້ຈັກພຣະວິນັຍບາງຂໍ້ຂອງພຣະພິກຂຸສົງຄ໌ນຳ ເພາະວ່າພຣະພິກຂຸສົງຄ໌ມີຫນ້າທີ່ອັນສຳຄັນຍ໌ທີ່ສຸດ ***ຄືຈະຮັກສາຕົວເອງຢ່າໃຫ້ມີໂທສ ທາງພຣະວິນັຍ*** *ຈຶ່ງຈະ ສົມເປັນທີ່ໄວ້ວາງພຣະຣາຊຫຣືທັຍຂອງພຣະບໍຣິມສາສດາ ແລະ* ***ຈະໄດ້ສົມເປັນຜູ້ທີ່ຕັ້ງຢູ່ໃນຖານະເປັນນາບຸນຍ໌ຂອງຊາວໂລກ ບໍ່ບໍຣິໂພຄຈຕຸປັຈຈັຍຂອງເຂົາໃຫ້ເປືອງລ້າໆ*** *ຄືຈັ່ງພື້ນນາອັນປຼາສຈາກວັຊພືຊ weed ຄືຫຍ້າທີ່ເປັນໂທສ ຍ່ອມຈະອຳນວຍໃຫ້ເຂົ້າທີ່ຊາວນາຫວ່ານລົງຈະເຣີນຍ໌ງອກງາມ ມີຜົລເຕັມເມັດເຕັມຮວງ ແຕ່ຫາກວ່ານາຮົກແຕ່ຫຍ້າ ເຂົ້າທີ່ຫວ່ານລົງກໍມີຜົລບໍ່ເຕັມທີ່ ຂໍ້ນີ້ສັນໃດພຣະພິກຂຸຫຼືສາມເນຣກໍສັນນັ້ນເຫມືອນກັນ* ***ຖ້າສີລບໍ່ຂາດ ບໍ່ມີໂທສທາງພຣະວິນັຍ*** *ກໍເທົ່າກັບນາທີ່ບໍ່ຮົກ ພືຊບຸນຍ໌ທີ່ຫວ່ານລົງກໍຍ່ອມມີຜົລມາກ ມີກຳໄຣມາກ ແຕ່ຖ້າສີລຂາດຫຼາຍມີໂທສທາງພຣະວິນັຍຫຼາຍ ກໍ*

ເທົ່າກັບທີ່ນາຮົກ ພືຊບຸນຍ໌ທີ່ຊາວໂລກຫວ່ານລົງກໍມີຜົລໜ້ອຍມີກຳໄຣໜ້ອຍ ດ້ວຍເຫຕຸນີ້ ພຣະພິກຂຸສາມເນຣຜູ້ຮູ້ໃນຫນ້າທີ່ຂອງຕົນ ***ຈຶ່ງພຍາຍາມຮັກສາຕົວບໍ່ໃຫ້ເປັນນາທີ່ຮົກແຕ່ຫຍ້າ!***

ກໍໃນການຮັກສາຕົວນັ້ນ ພຣະພິກຂຸສາມເນຣບາງຮູປບາງຄັ້ງບາງຄາວ ບໍ່ສາມາຖຈະເຮັດໃຫ້ບໍຣິສຸທທິ໌ເທົ່າທີ່ຄວຣໄດ້ ເພາະຄຣືຫັສຖ໌ຫຼືບຸຣຸສ, ສຕຣີ, ຫຼືທາຍົກທາຍິກາ ຜູ້ບໍ່ຮູ້ວິນັຍຂອງພຣະ ແລະມີທຸຣະກ່ຽວຂ້ອງກັບພຣະໃນວາຣະຕ່າງໆ ເຊັ່ນໃນຍາມເຮັດບຸນຍ໌ ແລ້ວເຮັດບໍ່ຖືກຕ້ອງພຣະວິນັຍ ພິກຂຸເກັງໃຈຄຣືຫັສຖ໌ ບາງເທື່ອຄຣືຫັສຖ໌ເກັງໃຈພິກຂຸຈຶ່ງເຮັດໃຫ້ພຣະຕ້ອງອາບັຕິ ຄືຕ້ອງໂທສທາງພຣະວິນັຍ ຢ່າງນີ້ຄຣືຫັສຖ໌ໄດ້ບຸນຍ໌ກໍແມ່ນແຕ່ໄດ້ໜ້ອຍ ເພາະຂນະດຽວກັນນັ້ນພຣະໄດ້ບາປຕ້ອງໂທສບໍ່ບໍຣິສຸທທິ໌ ເຫມືອນນາທີ່ຮົກເສັຽແລ້ວ ອີກຢ່າງນຶ່ງ ບາງເທື່ອບາງຮູປບໍ່ຮູ້ວິນັຍຂອງຕົນເອງດີພໍ ຫຼືບາງຮູປຮູ້ວິນັຍດີແລ້ວ ແຕ່ບໍ່ເອື້ອເຟື້ອໃນວິນັຍກໍຍ່ອມກ່ຽວຂ້ອງກັບຄຣືຫັສຖ໌ໃນທາງທີ່ຜິດໆ ແລະ ຄຣືຫັສຖ໌ກໍບໍ່ຮູ້ວິນັຍຂອງພຣະ ຈຶ່ງພາກັນປຕິບັຕິຜິດຮ່ວມກັນຢ່າງນີ້ ຈຶ່ງຮູ້ສຶກວ່າບໍ່ຄ່ອຍເຫມາະກັບພຸທທະສາສນິກຊົນເລີຍ

ດ້ວຍເຫຕຸນີ້ ເພື່ອທີ່ຈະໃຫ້ຄຣືຫັສຖ໌ ບຸຣຸສ-ສຕຣີທັ້ງຫລາຍຊ່ອຍກັນຮັກສາພິກຂຸສົງຄ໌ໃຫ້ບໍຣິສຸທທິ໌ເປັນນາບຸນຍ໌ຢ່າງດີ ຈະໄດ້ເພີ່ມປຣິມານຜົລແຫ່ງພືຊບຸນຍ໌ທີ່ບໍຣິຈາຄຫວ່ານລົງໄປໃຫ້ຫຼາຍຍິ່ງໆ ຂຶ້ນ ***ຂນ້ອຍຈຶ່ງໄດ້ຍົບຍົກເອົາພຣະວິນັຍບາງຂໍ້ທີ່ຄຣືຫັສຖ໌ ທັ້ງບຸຣຸສແລະສຕຣີຄວຣຮູ້*** ນຳມາຣຽບຣຽງເປັນຂໍ້ໆ ພໍເປັນແນວທາງແຫ່ງການສຶກສາແລະປຕິບັຕິສຳຫຼັບຄຣືຫັສຖ໌ ດັ່ງຕໍ່ໄປນີ້:

໑. ສຸພາພສຕຣີ ຢ່າຖືກຕ້ອງພິກຂຸສາມເນຣ..***(ສັງຄາທິເສສ ຂໍ້ ໔)***

໔. ສຸພາພບຸຣຸສ ຫຼືສຸພາພສຕຣີ ບໍ່ຄວຣຂໍຮ້ອງໃຫ້ພຣະຊັກສື່ຊາຍຫຍິງໃຫ້ເປັນສາມີພັຣຍາກັນ ແມ້ໃນເວລາສັ້ນໆ..***(ສັງຄາທິເສສ ຂໍ້ ໕)***

໖. ສຸພາພສຕຣີ ບໍ່ມີບຸຣຸສຜູ້ຮູ້ດຽງສາໄປນຳ ບໍ່ຄວຣເຂົ້າໄປຫາພຣະໃນທີ່ລັບຕາຫຼືລັບຫູ ເພາະອາຈຈະເຮັດໃຫ້ພຣະຖືກໂຈທດ້ວຍອາບັຕິຕ່າງໆ ຫຼືເປັນທາງໃຫ້ເກີດຄວາມເສັຽຫາຍຫຼາຍ...***(ອນິຍຕ ຂໍ້ ໑-໔)***

໔. ສຸພາພບຸຣຸສຫຼືສຕຣີ ເມື່ອສັທທາຈະຖວາຍເງິນທອງແກ່ພຣະພິກຂຸ ຫຼືສາມເນຣຕ້ອງມອບໃຫ້ແກ່ໄວຍາວັຈກຣ (ອ່ານ *"ໄວຍາວັດຈະກອນ"* ຜູ້ທີ່ຮັບທຳກິຈຂອງທ່ານ) ແລະແຈ້ງໃຫ້ທ່ານຮູ້ ຢ່າມອບໃຫ້ໃນມືຫຼືໃນຍ່າມ ຫຼືໃນບາຕຣ໌ຂອງທ່ານ ເປັນຕົ້ນ...***(ຈີວຣວັຄຄ໌ ຂໍ້ ໑໐- ໂກສິຍວັຄຄ໌ ຂໍ້ ໗)***

໕. ບຸຣຸສຜູ້ເປັນໄວຍາຈັກຣ໌ ເມື່ອຮັບເງິນທອງຂອງພຣະຮູປໃດໄວ້ເທົ່າໃດ ຕ້ອງຈັດສິ່ງຂອງທີ່ພຣະຕ້ອງການຖວາຍພຣະຮູປນັ້ນ ໃນຣາຄາເທົ່າເງິນທອງທີ່ຕົນຮັບໄວ້ນັ້ນ ໃນເວລາທີ່ທ່ານຂໍ ຖ້າເງິນທອງຫຼາຍພຣະຂໍຂອງໜ້ອຍ ກໍຈ່າຍເທົ່າທີ່ທ່ານຕ້ອງການ ເກັບສ່ວນທີ່ເຫລືອໄວ້ຈ່າຍຄູາວຕໍ່ໄປ...***(ຈີວຣວັຄຄ໌ ຂໍ້ ໑໐)***

໖. ບຸຣຸສ-ສຕຣີ ຜູ້ເປັນພໍ່ຄ້າ-ແມ່ຄ້າ ບໍ່ຄວຣຂາຍຂອງແກ່ພຣະພິກຂຸ ຫຼືສາມເນຣຜູ້ທີ່ຈັບຕ້ອງເງິນ (ທະນະບັຕຣ໌-ຫຼຽນເປັນຕົ້ນ) ມາຊື້ດ້ວຍຕົນເອງ...***(ໂກສິຍວັຄຄ໌ ຂໍ້ ໙)***

໗. ບຸຣຸສ-ສຕຣີ ບໍ່ຄວຣເອົາສິ່ງຂອງຂອງຕົນແລກກັບສິ່ງຂອງຂອງພຣະ-ຂອງສາມເນຣ...***(ໂກສິຍວັຄຄ໌ ຂໍ້ ໑໐)***

໗. ບຸຣຸສ-ສຕຣີ ບໍ່ຄວຣເອົາຜ້າອາບນ້ຳຝົນຖວາຍພຣະກ່ອນເຂົ້າວັສສາຫຼາຍກວ່າ ໑ ເດືອນ ແມ້ພຣະຂໍກໍບໍ່ຕ້ອງຖວາຍ ເວັ້ນໄວ້ແຕ່ພຣະທີ່ເປັນຍາຕິ ແລະພຣະທີ່ຕົນປະວາຣະນາໄວ້...*(ປັຕຕວັຄຄ໌ ຂໍ້ ໔)*

໙. ບຸຣຸສ-ສຕຣີ ເມື່ອຕຽມສິ່ງຂອງຈະຖວາຍແກ່ສົງຄ໌ (ບໍ່ສະເພາະບຸຄຄົລ) ຖ້າພຣະແນະນຳໃຫ້ຖວາຍສະເພາະຕົວທ່ານເອງ ຫຼືໃຫ້ຖວາຍສະເພາະພຣະຮູປໃດໆ ກໍຕາມ ບໍ່ຕ້ອງຖວາຍຕາມຄຳແນະນຳນັ້ນ...*(ປັຕຕວັຄຄ໌ ຂໍ້ ໑໐-ສະຫະທັມມິກະວັຄຄ໌ ຂໍ້ ໑໔)*

໑໐. ບຸຣຸສ-ສຕຣີ ເມື່ອຮຽນທັມມ໌ກັບພຣະ ຢ່າອອກສຽງພຣະທັມມ໌ພ້ອມກັບພຣະ ...*(ມຸສາວາທວັຄຄ໌ ຂໍ້ ໔)*

໑໑. ບຸຣຸສ ເມື່ອນອນໃນທີ່ມຸງ ທີ່ບັງ ອັນດຽວກັບພຣະຮອດ ໓ ຄືນແລ້ວ ຕ້ອງເວັ້ນເສັຽ ໑ ຄືນ ຕໍ່ໄປຈຶ່ງນອນໄດ້ອີກ...*(ມຸສາວາທວັຄຄ໌ ຂໍ້ ໕)*

໑໒. ສຕຣີ ຫ້າມນອນໃນທີ່ມຸງ ທີ່ບັງອັນດຽວກັບພຣະແມ້ໃນຄືນດຽວ...*(ມຸສາວາທວັຄຄ໌ ຂໍ້ ໖)*

໑໓. ບຸຣຸສ-ສຕຣີ ຖ້າພຣະໃຊ້ໃຫ້ຂຸດດິນໜຽວລ້ວນຫຼືດິນຮ່ວນລ້ວນ ບໍ່ຄວຣຂຸດ ແຕ່ຖ້າພຣະສະແດງຄວາມປະສົງຄ໌ວ່າຕ້ອງການຫລຸມຫຼືຄູເປັນຕົ້ນ ຫຼືວ່າຕ້ອງການເຮັດຄູໃຫ້ສູງເທົ່ານັ້ນເທົ່ານີ້ເປັນຕົ້ນ ກໍຄວຣຈັດການໃຫ້ຕາມປະສົງຄ໌ ພິກຂຸບໍ່ຄວຣໃຊ້ຄຳວ່າຂຸດດິນ "ໃຫ້ເປັນຂຸດຫລຸມ" ...*(ມຸສາວາທວັຄຄ໌ ຂໍ້ ໑໐)*

໑໔. ບຸຣຸສ-ສຕຣີ ຖ້າພຣະໃຊ້ໃຫ້ຕັດຕົ້ນໄມ້ ຫຼືເສັຽຫຍ້າທີ່ເກີດຢູ່ກັບດິນ ຫຼືໃຫ້ລົກຫຍ້າຕ່າງໆ ທີ່ເກີດຢູ່ໃນນ້ຳ ບໍ່ຄວຣ ຕັດ-ເສັຽ-ຮື້ຖອນ ແຕ່ຖ້າພຣະບອກວ່າ ເຮົາຕ້ອງການໄມ້-ຫຍ້າ-ຜັກ ຫຼືວ່າເຮົາຕ້ອງການທຳ

ຄວາມສະອາດໃນທີ່ຊຶ່ງຮົກຮີ້ ດ້ວຍຕົ້ນໄມ້ຫຼືຫຍ້າດັ່ງນີ້ເປັນຕົ້ນ ຈຶ່ງເຮັດໃຫ້ **...(ພູຕຄາມວັຄຄ໌ ຂໍ້ ໑)**

໑໕. ບຸຣຸສ-ສຕຣີ ນິມົນຕ໌ພຣະໃຫ້ສັນອາຫາຣຢ່າອອກຊື່ໂພຊນະ ໕ ຄື: ເຂົ້າສຸກ ຂນົມສົດ ຂນົມແຫ້ງ ປາ ເນື້ອ ຄວຣໃຊ້ກັປປິຢໂວຫາຣຫຼືຄຳພູດທີ່ສົມຄວຣ ເຊັ່ນເວົ້າວ່າ ***"ຂໍນິມົນຕ໌ສັນຈັ່ງຫັນ"*** ຫຼືວ່າ ***"ຂໍນິມົນຕ໌ສັນເພລ"*** ແລະຕ້ອງບອກວັນເວລາສຖານທີ່ໃຫ້ຊັດເຈນ ທັ້ງບອກໃຫ້ພຣະຮູ້ດ້ວຍວ່າໃຫ້ໄປກັນເອງ ຫຼືຈະມາຮັບ ອີກຢ່າງນຶ່ງການທີ່ນິມົນຕ໌ພຣະໃຫ້ສັນນັ້ນປຣາຣົພເຣື່ອງຫຍັງກໍຄວຣບອກໃຫ້ຮູ້ນຳ...***(ໂພຊນວັຄຄ໌ ຂໍ້ ໔)***

໑໖. ບຸຣຸສ-ສຕຣີ ເມື່ອເລີຍເວລາເພລແລ້ວ ຄືຕັ້ງແຕ່ທ່ຽງວັນໄປຈົນເຖິງມື້ໃຫມ່ ຢ່ານຳອາຫາຣໄປປະເຄນພຣະ ຫາກເປັນຂອງທີ່ເກັບຄ້າງຄືນໄດ້ ບໍ່ບູດ ບໍ່ເສັ້ຽ ເຊັ່ນ: ເຂົ້າສາຣ, ປາດິບ, ເນື້ອດິບ, ອາຫາຣສຳເຣັຈຮູປໃນກະປ໋ອງເປັນຕົ້ນ ກໍມອບໄວ້ແກ່ໄວຍາວັຈກຣຂອງທ່ານໄດ້... ***(ໂພຊນວັຄຄ໌ ຂໍ້ ໗)***

໑໗. ບຸຣຸສ-ສຕຣີ ຖ້າພຣະທີ່ບໍ່ແມ່ນຍາຕິແລະຕົນບໍ່ໄດ້ປະວາຣະນາໄວ້ ບໍ່ເປັນໄຂ້ ຂໍໂພຊນະອັນປະນີຕ ຄື: ເຂົ້າສຸກທີ່ຄົນດ້ວຍເນີຍໃສ, ເນີຍຂົ້ນ, ນ້ຳມັນ, ນ້ຳເຜີ້ງ, ນ້ຳອ້ອຍ, ປາ, ເນື້ອ, ນົມສົດ, ນົມສົ້ມ ແມ້ຢ່າງໃດຢ່າງນຶ່ງບໍ່ຄວຣຖວາຍ ແຕ່ຖ້າຂໍເພື່ອຜູ້ເປັນໄຂ້ຄວຣຖວາຍໂດຍແທ້ ...***(ໂພຊນວັຄຄ໌ ຂໍ້ ໙)***

໑໘. ບຸຣຸສ-ສຕຣີ ເມື່ອປະເຄນອາຫາຣຫຼືຢາເປັນຕົ້ນ ທຸກຢ່າງທີ່ພຣະຈະຕ້ອງກລືນກິນ (ສັນ) ຕ້ອງປະເຄນໃຫ້ຖືກວິທີ ດັ່ງນີ້

ກ. ພາຊນະຫຼືທີ່ຂອງນັ້ນ ບໍ່ໃຫຍ່ຫຼືຫນັກຈົນເກີນໄປ ຍົກຄົນດຽວໄດ້ຢ່າງພໍດີ

ຂ. ເຂົ້າຢູ່ໃນ***ຫັຕຖບາສ***ຂອງພຣະ ຄື ຫ່າງຈາກພຣະປະມານ ໑ ສອກ ເປັນສ່ວນສຸດຂອງສິ່ງຂອງຫຼືຂອງບຸຄຄົລຜູ້ປະເຄນ

ຄ. ນ້ອມກາຍຖວາຍດ້ວຍຄວາມເຄົາຣົພ

ງ. ກິຣິຍາທີ່ຖວາຍນັ້ນ ຖວາຍດ້ວຍມືຫຼືຂອງທີ່ເນື່ອງດ້ວຍມື ເຊັ່ນ ຊ້ອນ-ພາຊນະກໍໄດ້

ຈ. ພຣະຮັບດ້ວຍມື ຫຼືຂອງທີ່ເນື່ອງດ້ວຍມື ເຊັ່ນ ບາຕຣ໌-ຜ້າກໍໄດ້...***(ໂພຊນວັຄຄ໌ ຂໍ້ ໑໐)***

໑໙. ສຕຣີບໍ່ມີບຸຣຸສຜູ້ຮູ້ດຽງສາຢູ່ເປັນເພື່ອນ ຕ້ອງບໍ່ນັ່ງ ບໍ່ນອນ ບໍ່ຢືນ ບໍ່ເດີນ ໃນຫ້ອງກັບພຣະ ແມ້ຈະມີສຕຣີຫລາຍຄົນກໍບໍ່ໄດ້...***(ອເຈລກວັຄຄ໌ ຂໍ້ ໔)***

໔໐. ສຕຣີຕ້ອງບໍ່ນັ່ງ ບໍ່ນອນໃນທີ່ແຈ້ງກັບພຣະນຶ່ງຕໍ່ນຶ່ງ ຖ້າສຕຣີຫລາຍຄົນນັ່ງໄດ້ ແຕ່ການນອນນັ້ນບໍ່ຄວຣ ແມ້ການຢືນ ການເດີນກັບພຣະນຶ່ງຕໍ່ນຶ່ງ ດ້ວຍອາການລັກລີ້ກໍບໍ່ຄວຣ...***(ອເຈລກວັຄຄ໌ ຂໍ້ ໕)***

໔໑. ບຸຣຸສ-ສຕຣີ ທີ່ບໍ່ແມ່ນຍາຕິຂອງພຣະ ແມ້ຈະເປັນເຂີຍ ລູກໃພ້ ຫຼືພັຣຍາເກົ່າຂອງພຣະ (ປຸຣານທຸຕິຢິກາ) ຫາກບໍ່ໄດ້ກ່ຽວຂ້ອງທາງສາຍໂລຫິຕ ກໍຊື່ວ່າບໍ່ແມ່ນຍາຕິ ຖ້າມີສັທທາຈະໃຫ້ພຣະຂໍປັຈຈັຍ ໔ ຫຼືສິ່ງຂອງຕ່າງໆ ຈາກຕົນໄດ້ ກໍຕ້ອງປະວາຣະນາ ຄືເປີດໂອກາສໃຫ້ພຣະຂໍໄດ້ໂດຍລັກສນະ ໔ ຢ່າງ ຢ່າງໃດຢ່າງນຶ່ງ ຄື:

ກ. ກຳຫນົດປັຈຈັຍ ຫຼືສິ່ງຂອງ ເຊັ່ນ: ຈີວຣ, ບິນທບາຕ, ທີ່ນອນ , ທີ່ນັ່ງ, ຢາ, ປຶ້ມ, ປາກກາ ຯລຯ

ຂ. ກຳຫນົດເວລາ ຄືໃຫ້ຂໍໄດ້ຕລອດເທົ່ານັ້ນວັນ, ເທົ່ານັ້ນເດືອນ, ເທົ່ານັ້ນປີ, ຕັ້ງແຕ່ວັນທີ່ເທົ່າໃດເຖິງເທົ່າໃດ

ຄ. ກຳຫນົດທັ້ງປັຈຈັຍ-ສິ່ງຂອງ ແລະເວລາ

ງ. ບໍ່ກຳຫນົດທັ້ງປັຈຈັຍ ສິ່ງຂອງແລະເວລາ ຖ້າຈະໃຫ້ຂໍໄດ້ເປັນນິຕຍ໌ ຕ້ອງບອກວ່ານິມົນຕ໌ຂໍໄດ້ຕລອດກາລເປັນນິຕຍ໌

ເມື່ອປະວາຣະນາແລ້ວ ຖ້າພຣະຂໍເກີນກຳຫນົດຫຼືເກີນ ៤ ເດືອນ ບໍ່ຄວຣຖວາຍ ເວັ້ນໄວ້ແຕ່ຕົນປະວາຣະນາອີກ ຫຼືປະວາຣະນາເປັນນິຕຍ໌...***(ອເຈລກວັຄຄ໌ ຂໍ້ ໗)***

<u>ຫມາຍເຫຕຸ:</u> ຄຳວ່າ ຍາຕິ ໄດ້ແກ່ຄົນທີ່ກ່ຽວເນື່ອງກັນ ໗ ຊັ້ນ ຄື ໑. ທວດ ໒. ປູ່ຍ່າຕາຍາຍ ໓. ພໍ່ແມ່ ໔. ພີ່ນ້ອງ ໕. ລູກ ໖. ຫລານ ໗. ເຫລນ

໒໔. ບຸຣຸສ-ສຕຣີ ບໍ່ຄວຣເອົາຂອງເສພຕິດໃຫ້ໂທສ ເຊັ່ນ: ສຸຣາເມຣັຍ, ຝິ່ນ, ເຮໂຣອີນ ກັນຊາຖວາຍພຣະ...***(ສຸຣາປານວັຄຄ໌ ຂໍ້ ໑)***

໒໓. ບຸຣຸສ-ສຕຣີ ຢ່າເອົານ້ຳທີ່ມີຕົວສັຕວ໌ໄປຕັ້ງໄວ້ໃຫ້ພຣະບໍຣິໂພຄ ຄື: ດື່ມ, ອາບ, ລ້າງຕີນ ໃຊ້ສອຍ...***(ສັປປານວັຄຄ໌ ຂໍ້ ໒)***

໒໔. ບຸຣຸສ-ສຕຣີ ຜູ້ນຳສິນຄ້າຫນີພາສີ ບໍ່ຄວຣເດີນທາງຮ່ວມກັບພຣະ ຫຼືບໍ່ຄວຣໃຫ້ກ່ຽວຂ້ອງກັບພຣະ...***(ສັປປານວັຄຄ໌ ຂໍ້ ໖)***

໒໕. ສຕຣີ ບໍ່ຄວຣຊວນພຣະເດີນທາງໄກລ ແມ້ສິ້ນຣະຍະບ້ານນຶ່ງ ແມ້ນັ່ງຣົຖ ນັ່ງເຮືອ ໄປພຽງນຶ່ງຕໍ່ນຶ່ງກໍບໍ່ຄວຣ ແມ້ສຕຣີຫລາຍຄົນ ແຕ່ບໍ່ມີ

ບຸຣຸສຜູ້ຮູ້ດຽງສານັ່ງໄປນຳ ກໍບໍ່ຄວຣ ແມ້ບຸຣຸສໄປນຳ ຫາກສຕຣີຂັບຣົຖເຮືອເອງ ກໍບໍ່ຄວຣ ເວັ້ນໄວ້ແຕ່ເຮືອຂ້າມຟາກ...***(ສັປປານວັຄຄ໌ ຂໍ້ ៣)***

໔໖. ບຸຣຸສ-ສຕຣີ ຈະຖວາຍອາຫາຣແກ່ພຣະຜູ້ຢູ່ໃນປ່າອັນເປັນທີ່ປ່ຽວ ຕ້ອງແຈ້ງຂ່າວລ່ວງຫນ້າກ່ອນ...***(ປາຕິເທສນີຍະ ຂໍ້ ໔)***

໔៣. ບຸຣຸສ-ສຕຣີ ເມື່ອພຣະຮັບບິນທບາຕເຕັມບາຕຣ໌ແລ້ວ ຢ່າເອົາອາຫາຣວາງເທິງຝາບາຕຣ໌ ຫຼືຢ່າໃສ່ຖົງໃຫ້ພຣະຫິ້ວ...***(ໂພຊນະປຕິສັງຍຸຕະ ຂໍ້ ໔)***

໔໘. ບຸຣຸສ-ສຕຣີ ເມື່ອນິມົນຕ໌ພຣະມາສັນໃນບ້ານຕ້ອງຈັດທີ່ສັນໃຫ້ພ້ອມ ເຊັ່ນ: ນ້ຳລ້າງຕີນ, ຜ້າເຊັດຕີນ, ນ້ຳສັນ, ນ້ຳໃຊ້, ກະໂຖນ, ຜ້າ-ກະດາສເຊັດມືອ, ເຊັດປາກ, ຊ້ອນສ້ອມແລະຊ້ອນກລາງ ຢ່າໃຫ້ບົກພ່ອງ...***(ໂພຊນະປຕິສັງຍຸຕະ ຂໍ້ ໑໐)***

໔໙. ບຸຣຸສ-ສຕຣີ ເມື່ອຈັດທີ່ໃຫ້ພຣະສວດຫຼືສະແດງພຣະທັມມະເທສນາ ຫຼືປາຖະກະຖາທັມມ໌ ຕ້ອງຈັດທີ່ໃຫ້ພຣະນັ່ງ ຢ່າໃຫ້ຢືນ ແລະຕ້ອງບໍ່ຕ່ຳກວ່າທີ່ຂອງຜູ້ນັ່ງຟັງ...***(ທັມມເທສນາປຕິສັງຍຸຕ ຂໍ້ ໑໓, ໑໔)***

໕໐. ບຸຣຸສ-ສຕຣີ ເມື່ອຟັງທັມມະເທສນາຫຼືຟັງປາຖະກະຖາທັມມ໌ຕ້ອງຟັງດ້ວຍກິຣິຍາອາການເຄົາຣົພ ແມ້ຟັງພຣະສວດໃນງານມຸງຄົລຫຼືງານສົພເປັນຕົ້ນ ກໍຕ້ອງເຄົາຣົພເຊັ່ນດຽວກັນ ບໍ່ຄວຣນັ່ງຄຸຍກັນເລີຍ ຈະຄຸຍໃນເວລາພຣະຫຍຸດສວດໄດ້...***(ທັມມເທສນາປຕິສັງຍຸຕ ທຸກຂໍ້)***

໕໑. ບຸຣຸສ-ສຕຣີ ຈະຖວາຍຄັນຮົ່ມແກ່ພຣະຕ້ອງເລືອກເອົາຊະນິດທີ່ບໍ່ສລັບສີ ເຊັ່ນຄັນຮົ່ມຜ້າດຳລ້ວນ ຄັນຮົ່ມເກັ້ຽ ຄັນຮົ່ມພລາສຕິກ ສີນ້ຳຕາລ ສີດຳ ສີເຫລືອງລ້ວນ...***(ວິ. ໔/໕໕)***

໓໘. ບຸຣຸສ-ສຕຣີ ຈະຖວາຍເກີບແກ່ພຣະຕ້ອງເລືອກເອົາຊະນິດທີ່ບໍ່ມີສົ້ນສູງ ບໍ່ມີປີກສົ້ນ ບໍ່ມີປີກຫລັງຕີນ ມີແຕ່ສາຍຮັດຫລັງຕີນກັບສາຍທີ່ຄີບດ້ວຍນີ້ວ ແລະມີສີຫມົ່ນຫມອງ ເຊັ່ນ ສີນ້ຳຕາລແກ່...*(ວິ. ໔/໓໖)*

໓໙. ບຸຣຸສ-ສຕຣີ ເມື່ອຈະຖວາຍຕຽງຕັ່ງແກ່ພຣະຕ້ອງເລືອກເອົາແຕ່ທີ່ມີຕີນສູງບໍ່ເກີນ ๘ ນີ້ວພຣະສຸຄົຕ ຫຼື ໙ ນີ້ວຟຸຕ ເວັ້ນໄວ້ແຕ່ແມ່ແຄຣ່ ແລະບໍ່ມີຮູບສັຕວ໌ຮ້າຍທີ່ຕີນ ເຊັ່ນ: ຕຽງດັ່ງສິງຫ໌ ຫຼືບັລລັງກ໌ ແລະຕຽງນັ້ນຕ້ອງບໍ່ໃຫຍ່ເຖິງນອນໄດ້ ໔ ຄົນ ທີ່ນອນກໍບໍ່ໃຫຍ່ຢ່າງຕຽງ ຟູກຕຽງ ຟູກຕັ່ງ ແລະທີ່ນັ່ງທີ່ນອນບໍ່ຢັດນຸ່ນຫຼືສຳລີ...*(ຣຕນວັຄຄ໌ ຂໍ້ ໕ ແລະ ວິ. ໔/໓໗)*

໔໐. ບຸຣຸສ-ສຕຣີ ເມື່ອຈະຖວາຍຫມອນຫນູນຫົວແກ່ພຣະ ຕ້ອງໃຫ້ມີຂນາດຫນູນໄດ້ຫົວດຽວບໍ່ເຖິງ ໔ ຫົວ ຫມອນຂ້າງບໍ່ຄວຣຖວາຍ...*(ວິ. ໔/໔໐)*

໔໑. ສຕຣີ ຕ້ອງບໍ່ນັ່ງ ເທິງອາສນະຜືນດຽວກັນ ເທິງຕຽງມ້ານັ່ງດຽວກັນກັບພຣະ ແມ້ເທິງພື້ນທີ່ບໍ່ມີຫຍັງປູລາດເລີຍ ກໍບໍ່ຄວຣນັ່ງສເມີກັບພຣະຫຼືສູງກວ່າພຣະ ໄປໃນຣົຖ-ເຮືອມີທີ່ຈຳກັດ ຈະຕ້ອງນັ່ງທີ່ມ້ານັ່ງດຽວກັນກັບພຣະຕ້ອງໃຫ້ມີບຸຣຸສນັ່ງຄັ່ນໄວ້ເສັຽກ່ອນ...*(ວິ. ໔/໑໐)*

໔໒. ບຸຣຸສ-ສຕຣີ ບໍ່ຄວຣເອົາວັຕຖຸອະນາມາສປະເຄນພຣະ ວັຕຖຸອນາມາສ ຄືສິ່ງທີ່ພຣະບໍ່ຄວຣແຕະຕ້ອງ ມີ ໖ ປະເພທ ດັ່ງນີ້:

ກ. ຜູ້ຫຍິງ ກະເທີຍ ເຄື່ອງແຕ່ງກາຍຂອງຄົນເຫລົ່ານັ້ນ ແຕ່ທີ່ເຂົາສລະແລ້ວບໍ່ນັບ ຕຸ໊ກຕາຫຍິງ ສັຕວ໌ດິຣັຈສານຕົວເມັຽ

ຂ. ທອງ ເງິນ ມຸກດາ ມນີ ໄພທູຣຍ໌ ປະພາລ ທັບທິມ ບຸສຣາຄັມ ສັງຂ໌ທີ່ຂັດແລ້ວ ສີລາຊະນິດດີ ເຊັ່ນ, ຫຍົກ ໂມຣາ

ຄ. ສັສຕຣາວຸທຕ່າງຊະນິດ ທີ່ໃຊ້ທຳຮ້າຍຊີວິຕຮ່າງກາຍ

ງ. ເຄື່ອງດັກສັຕວ໌ບົກ-ນ້ຳ

ຈ. ເຄື່ອງປະໂຄມ

ສ. ເຂົ້າເປືອກແລະພືລໄມ້ອັນເກີດຢູ່ໃນທີ່...*(ວິ. ໔/໗໖)*

໓໗. ສຕຣີ ບໍ່ຄວຣເກັ້ງກ່ອມ ຍອກລໍ່ພຣະດ້ວຍການພູດປະເລົ້າປະໂລມ ຫຼືດ້ວຍການແຕ່ງຕົວພະເວີກພະວາກ ຫຼືລໍ່ດ້ວຍຊັພຍ໌...*(ວິ. ໔/໗໑)*

໓໘. ບຸຣຸສ-ສຕຣີ ບໍ່ຄວຣເອົາຂອງເດັກຫຼິ້ນ ເຊັ່ນເຮືອນ້ອຍໆ ຣົຖນ້ອຍໆ ຖວາຍພຣະ...(ວິ. ໔/໑໑໘)

໓໙. ບຸຣຸສ-ສຕຣີ ບໍ່ຄວຣຊັກຊວນພຣະຫຼິ້ນການພນັນ ມີແພ້ ມີຊະນະ ເຊັ່ນຫມາກຮ້ອດ ຫມາກບ້າ ຯລຯ...*(ວິ. ໔/໑໑໘)*

໔໐. ບຸຣຸສ-ສຕຣີ ບໍ່ຄວຣຮຽນດິຣັຈສານວິຊາຈາກພຣະແລະບໍ່ຄວຣບອກດິຣັຈສານວິຊາແກ່ພຣະ ດິຣັຈສານວິຊາຄືຄວາມຮູ້ໃນການທຳສເນ່ຫ໌ ໃນການໃຊ້ພູຕຜີປີສາຈທຳຜູ້ອື່ນໃຫ້ເຖິງຄວາມວິບັຕິໃນທາງອວດຣິທທິ໌ເດຊຕ່າງໆ ໃນທາງທຳນາຍທາຍທັກບອກຫວຍບອກເບີຣ໌ ໃນທາງທີ່ນຳໃຫ້ຫລົງງົມງາຍ ເຊັ່ນຫຸງເງິນ ຫຼືທອງແດງໃຫ້ເປັນທອງ...*(ວິ. ໔/໑໔໐)*

໔໑. ບຸຣຸສ-ສຕຣີ ບໍ່ຄວຣໃຊ້ພຣະໃນກິຈນອກພຣະພຸທທະສາສນາ ແຕ່ຈະຂໍໃຫ້ຊ່ອຍກິຈພຣະພຸທທະສາສນາ ເຊັ່ນໃຫ້ຊ່ອຍນິມົນຕ໌ພຣະໄປໃນການບຳເພັນບຸນຍ໌ຢູ່ໄດ້...*(ວິ. ໔/໑໔໐)*

໔໔. ບຸຣຸສ-ສຕຣີ ບໍ່ຄວຣນຳສິ່ງຂອງອັນມີຄ່າຝາກໄວ້ກັບພຣະ ເພາະອາຈເກີດອັນຕຣາຍແກ່ພຣະໄດ້ ເຊັ່ນ ອັນຕຣາຍໃນການຈະເຣີນຍ໌ສະມະນະທັມມ໌ ຖືກປລົ້ນ ຖືກເປັນຜູ້ຕ້ອງທົດແທນໃນເມື່ອຂອງນັ້ນຫາຍ...(ວິ. ໔/໑໔໔)

໔໓. ບຸຣຸສ-ສຕຣີ ບໍ່ຄວຣເອົາເນື້ອສັຕວ໌ທີ່ບໍ່ນິຍົມເປັນອາຫາຣຖວາຍພຣະ ເນື້ອທີ່ບໍ່ນິຍົມເປັນອາຫາຣ ຄື: ເນື້ອມນຸສຍ໌, ຊ້າງ, ມ້າ, ສຸນັຂ, ງູ, ສີຫ໌, ເສືອໂຄຣ່ງ, ເສືອເຫລືອງ, ຫມີ, ເສືອດາວ...*(ວິ. ໔/໑໑໓)*

໔໔. ບຸຣຸສ-ສຕຣີ ບໍ່ຄວຣເອົາເນື້ອສັຕວ໌ທີ່ນິຍົມເປັນອາຫາຣແຕ່ຍັງດິບ ບໍ່ສຸກດ້ວຍໄຟ ເຊັ່ນ: ປູເຄັມ, ກຸ້ງສົ້ມ, ຫອຍເຄັມ, ປາເຄັມ, ແຫນມ, ກະປິ, ລາບເນື້ອດິບ, ໄຂ່ລວກບໍ່ສຸກປະເຄນພຣະ ຄວຣມອບໄວ້ແກ່ກັປປິຍກາຣກ "ກັປປິຍະກາຣະກະ" ຄືຜູ້ມີຫນ້າທີ່ເຮັດໃຫ້ເປັນຂອງຄວຣແກ່ພຣະ...*(ວິ. ໔/໑໑໓)*

໔໕. ບຸຣຸສ-ສຕຣີ ບໍ່ຄວຣເອົາອຸທິສມັງສະຖວາຍພຣະ ອຸທິສມັງສະ ຄືເນື້ອຫຼືໄຂ່ສັຕວ໌ທີ່ເຂົາຂ້າເຈາະຈົງພິກຂຸສາມເນຣ...*(ວິ. ໔/໑໑໓)*

໔໖. ບຸຣຸສ-ສຕຣີ ຢ່າເອົາ***ພີຊຄາມ*** ຄືຜົລໄມ້ມີເມັດສຸກບາງຢ່າງ ເຊັ່ນ: ຫມາກເຜັດສຸກ, ມະເຂືອສຸກ, ອ້ອຍທີ່ຍັງບໍ່ໄດ້ປອກ, ຜັກບົ້ງ, ຂະມິ້ນ, ກະຊາຍ, ກະທຽມ, ຫອມ, ໂຫຣະພາ ຯລຯ ທີ່ພົ້ນຈາກທີ່ເກີດທີ່ຢູ່ແລ້ວ ແຕ່ຍັງປູກໃຫ້ງອກໄດ້ອີກຖວາຍພຣະ ຄວຣເຮັດໃຫ້ເປັນຂອງທີ່ບໍ່ອາຈປູກໃຫ້ງອກໄດ້ແລ້ວ ຈຶ່ງຖວາຍພຣະ...*(ວິ. ໔/໑໑໔)*

໔໗. ບຸຣຸສ-ສຕຣີ ຈະເຮັດນ້ຳປານະຖວາຍພຣະ ຄວຣເລືອກເອົາຜົລໄມ້ສຸກທີ່ນິຍົມເປັນອາຫາຣ ຂະນິດທີ່ບໍ່ໃຫຍ່ກວ່າຜົລມະຕູມຫຼືຜົລກະເບົາ ຂນາດນ້ອຍບໍ່ຈຳກັດ ເອົາມາທຳຄວາມສະອາດ ຄັ້ນແລ້ວກຮອງໃຫ້ຫມົດກາກ ເຈືອນ້ຳຈືດທີ່ສະອາດແດ່ກໍໄດ້ ແຕ່ຢ່າໃຊ້ນ້ຳຮ້ອນ ແລະຢ່າຕົ້ມນ້ຳປານະດ້ວຍໄຟ ຈະເຈືອນ້ຳຕາລເກືອແດ່ກໍໄດ້ ເຮັດແລ້ວຕ້ອງຖວາຍໃຫ້ພຣະສັນໃນວັນນັ້ນ ຢ່າປ່ອຍໃຫ້ຂ້າມຄືນ...*(ວິ. ໔/໑໑໗)*

໔໗. ບຸຣຸສ-ສຕຣີ ບໍ່ຄວຣຖືເອົາມໍຣະດົກຂອງພຣະຜູ້ມໍຣະນະພາພໄປແລ້ວ ບໍ່ວ່າພຣະຮູບນັ້ນຈະເປັນພໍ່ ລູກ, ຍາຕິ, ມິຕຣ໌ ຫຼືກ່ຽວຂ້ອງກັນໂດຍສຖານະໃດໆ ກໍຕາມ ແມ້ພຣະໄດ້ທຳພິນັຍກັມມໄວ້ໃຫ້ ກໍຖືເອົາບໍ່ໄດ້ເພາະທາງວິນັຍຂອງສົງຄ໌ມີຢູ່ວ່າ ມໍຣະດົກຂອງພຣະຜູ້ມໍຣະນະຕົກເປັນຂອງສົງຄ໌ທັ້ງໝົດ ແມ້ພຣະໄດ້ພູດໄວ້ດ້ວຍຄຳອັນເປັນອນາຄົຕວ່າ ***"ຖ້າເຮົາຕາຍແລ້ວ ເຈົ້າຈົ່ງເອົາສິ່ງນັ້ນສິ່ງນີ້ໄປ"*** ດັ່ງນີ້ ກໍຖືເອົາບໍ່ໄດ້ ແຕ່ສິ່ງທີ່ພຣະມອບໃຫ້ດ້ວຍຄຳເປັນປັຈຈຸບັນວ່າ ***"ອາຕມາໃຫ້ສິ່ງນັ້ນສິ່ງນີ້ແກ່ເຈົ້າ"*** ກໍຖືເອົາໄດ້ສະເພາະສິ່ງທີ່ຣະບຸເຖິງ ຫາກຣະບຸທັ້ງໝົດກໍຖືເອົາໄດ້ທັ້ງໝົດ...***(ວິ. ໔/໑໕໔/໑໕໕)***

໔໘. ບຸຣຸສ-ສຕຣີ ເມື່ອຈະຖືເອົາສິ່ງຂອງຂອງພຣະດ້ວຍວິສາສະຕ້ອງໃຫ້ຄົບອົງຄ໌ ໓ ຄື:

ກ. ເຄີຍເຫັນກັນ ເຄີຍຄົບກັນ ເຄີຍເວົ້າກັນໄວ້ຢ່າງໃດຢ່າງນຶ່ງ

ຂ. ຮູ້ວ່າຖືເອົາແລ້ວ ເຈົ້າຂອງຈະພໍໃຈ

ຄ. ເຈົ້າຂອງຍັງມີຊີວິຕຢູ່...***(ວິ. ໔/໑໕໗)***

໕໐. ບຸຣຸສ-ສຕຣີ ເມື່ອພຍາບາລພຣະຜູ້ເຈັບໜັກ ສັນອາຫາຣບໍ່ໄດ້ ເມື່ອເຖິງເວລາວິກາລຫິວຈັດ ຫາກບໍ່ໄດ້ອາຫາຣອາຈເປັນອັນຕຣາຍຈະຕົ້ມເຂົ້າຫຼືເນື້ອສັຕວ໌ທີ່ນິຍົມເປັນອາຫາຣ (ເວັ້ນອຸທິສມັງສະ) ໃຫ້ແຫລວກຣອງໃຫ້ໝົດກາກ ເອົາແຕ່ນ້ຳເຂົ້າ ນ້ຳເນື້ອທີ່ໃສຖວາຍໃຫ້ພຣະດື່ມໃນເວລາວິກາລໄດ້ ການທີ່ຈະອ້າງວ່າທ່ານໝໍສັ່ງໃຫ້ພຣະປ່ວຍສັນອາຫາຣໃນວິກາລໄດ້ ແລ້ວນຳອາຫາຣຊະນິດຕ່າງໆ ໄປຖວາຍໃນວິກາລນັ້ນ ບໍ່ຄວຣ

ເລີຍ ຫາກພຣະຢາກສັນອາຫາຣໃນວິກາລໂດຍບໍ່ເອື້ອເຟື້ອຕໍ່ວິນັຍແລ້ວຄວຣໃຫ້ສຶກເສັ່ງກ່ອນ ຈຶ່ງຈັດຖວາຍໃຫ້ຮັບປະທານ...*(ວິ. ໔/໑໗໕)*

໕໑. ສຕຣີທີ່ເປັນໂສເພນີ ເປັນຫມ້າຍ ເປັນສາວເທື້ອ ເປັນຊີແລະກະເທີຍ ບໍ່ຄວຣໄປມາຫາສູ່ກັບພຣະ ໂດຍບໍ່ເປັນກິຈຈະລັກສນະຫຼືຜິດເວລາ...*(ວິ. ໔/໑໘໑)*

໕໔. ບຸຣຸສ-ສຕຣີ ບໍ່ຄວຣນິມົນຕ໌ພຣະເຂົ້ານັ່ງໃນຮ້ານສຸຣາ ຈະເປັນທີ່ຂາຍ ຫຼືທີ່ກລັ່ນສຸຣາ ຫຼືທີ່ດອງເມຣັຍກໍຕາມ...*(ວິ. ໔/໑໘໑)*

ເຣື່ອງສຳຫຼັບພຣະສົງຄ໌ທີ່ຕ້ອງກາຣສຶກສາຄົ້ນຄວ້າ ***ຫລັກເກນທ໌ ວິທີສູຕປາຕິໂມກຂ໌*** ໃຫ້ເບິ່ງໃນ *พຣະໄຕຣປິດົກ ເຫຼັ້ມທີ່ ໔ ພຣະວິນັຍປິດົກ ເຫຼັ້ມທີ່ ໔ ມຫາວັຄຄ໌ ພາຄ ໑* ຂໍ້ຄວາມທີ່ [໑໗໕]-[໑໘໐] ***ສ່ວນບົທສລຸບທັ້ງຫມົດມາຈາກ*** *ພຣະໄຕຣປິດົກ ເຫຼັ້ມທີ່ ໔ ພຣະວິນັຍປິດກ ເຫຼັ້ມທີ່ ໔ ມຫາວິພັງຄ໌ ພາຄ ໔ ຂໍຄວາມຈະເຣີນຍ໌ໃນທັມມ໌ຈົ່ງບັງເກີດມີແດ່ທຸກໆ ທ່ານດ້ວຍເທີ້ນຯ*

ແຕ່ບຸຣຸສຫຼືສຕຣີກໍຕາມ*ທີ່ເປັນອຸບາສົກ-ອຸບາສິກາ* ຫາກຫວັງຄວາມຈະເຣີນຍ໌ແກ່ຕົນ ແກ່ວົງສ໌ຕກຸລຂອງຕົນ ແກ່ປະເທສຊາຕບ້ານເມືອງ ແລະແກ່ພຸທທະສາສນາ ຄວຣສຶກສາໃຫ້ມີຄວາມຮູ້ກ່ຽວກັບວິນັຍຂອງພິກຂຸສົງຄ໌ບາງຂໍ້ ຕາມສົມຄວຣທົ່ວທີ່ຄວາມສາມາຖຂອງຕົນ ຕາມບົທ ສຸລຸບທີ່ຮວບຮວມໄວ້ນີ້ ແລະປຕິບັຕິໃຫ້ຖືກຕ້ອງ ຄົນອື່ນຊາຕອື່ນທີ່ເປັນຊາວພຸທທ໌ນຳກັນ ຫຼືຄົນທີ່ນັບຖືສາສນາອື່ນຈະບໍ່ໄດ້ຕຳໜິຕິຕຽນເຮົາໄດ້ ກໍຍ່ອມຈະເຫມາະສົມກັບຄວາມເປັນພຸທທະສາສນິກຊົນ ແລະຍ່ອມຊ່ອຍປະດັບພຣະພຸທທະສາສນາໃຫ້ຮຸ່ງເຮືອງຍືນຍາວແທ້ແລ້ວທ່ານເອີຍໆ

ອາຈາຣຍ໌*ໄພທູຣຍ໌ ອິນທວົງສ໌*

ຕັ້ງວັນທີ່ ໒໐ ກຸມພາ ໒໕໖໐

ຣັຖແຄລິຟໍເນັຽ, ປະເທສສຫຣັຖອເມຣິກາ